



# ບົດບາດຂອງ ພຣະຄຳພີ

ບົດຮຽນທີ 4 ສຳລັບສະບາໂຕທີ 25 ເມສາ 2026


“ເພາະວ່າພຣະທຳຂອງພຣະເຈົ້າປະກອບດ້ວຍຊີວິດ ແລະ ຣິດເດດ ຄົມກວ່າດາບ
ສອງຄົມທຸກດວງ ແທງຊອດເຖິງຈິດໃຈ ແລະ ວິນຍານ ຕະຫລອດທັງຄໍ່ກະດູກ
ແລະ ໄຂໃນກະດູກເຊື່ອມຕິດຕໍ່ກັນ ຈຶ່ງສັງເກດຮູ້ຄວາມຄິດ ແລະ ຄວາມມຸ່ງໝາຍ
ໃນໃຈໄດ້” (ຮຣ 4:12)

ພຣະຄຳພີແມ່ນປື້ມທີ່ຂາຍດີທີ່ສຸດໃນໂລກ, ຂາຍດີກວ່າໜັງສືທີ່ຂາຍດີເປັນອັນດັບສອງ ເຖິງຫ້າເທົ່າ. ແຕ່ວ່າບໍ່ໄດ້ເປັນແບບນີ້ສະເໝີໄປ

ເຄີຍມີຊ່ວງເວລາໜຶ່ງ ທີ່ການຄອບຄອງພຣະຄຳພີ, ອ່ານພຣະຄຳພີ, ຫລື ແມ້ແຕ່ການເວົ້າກ່ຽວກັບພຣະຄຳພີນັ້ນ ອາດເປັນເຫດຜົນໃຫ້ຕ້ອງຕິດຄຸກ, ຖືກທໍລະມານ ຫລືແມ້ກະທັ້ງຖືກປະຫານຊີວິດ.






ຖ້າບໍ່ແມ່ນການຄຸ້ມຄອງທີ່ພິເສດຈາກພຣະເຈົ້າແລ້ວ, ພຣະຄຳພີຄົງຈະສູນຫາຍໄປດົນແລ້ວ, ຍ້ອນຫຍັງ? ແມ່ນຫຍັງເຮັດໃຫ້ພຣະຄຳພີເປັນໄດ້ທັງສິ່ງທີ່ຜູ້ຄົນຮັກ ແລະ ສິ່ງທີ່ຜູ້ຄົນກຽດຊັງ?

- ສັດຕູຂອງພຣະຄຳພີ
- ທາງທີ່ຖືກ ແລະ ທາງທີ່ຜິດໃນການອ່ານພຣະຄຳພີ
- ພຣະຄຳພີແມ່ນຫຍັງ?
- ຜົນຕາມມາດ້ານດີ ໃນການອ່ານພຣະຄຳພີ
- ມິດສະຫາຍຂອງພຣະຄຳພີ

# ສັດຕູຂອງພຣະຄຳພີ

**“ຈົ່ງເອົາຄວາມພົ້ນເປັນເຄື່ອງຄຸ້ມປ້ອງກັນຫົວໄວ້ ແລະ ຈົ່ງຖືພຣະແສງຂອງພຣະວິນຍານຄືພຣະທຳຂອງພຣະເຈົ້າ” (ອຟຊ 6:17)**

ຄິດກ່ຽວກັບພຣະວັດຈະນະຂອງພຣະເຈົ້ານັ້ນສາມາດເຮັດຫຍັງໄດ້ແດ່: ສ້າງ ແລະ ໃຫ້ຊີວິດ (ພສສ 33:6), ເຮັດໃຫ້ຄົນທີ່ຕາຍຟື້ນຄືນມາ(ຢຮ 5:28-29).





ແລ້ວພຣະຄຳພີ ເຊິ່ງເປັນພຣະວັດຈະນະຂອງພຣະເຈົ້າສາມາດເຮັດຫຍັງໄດ້ແດ່? ມີອຳນາດທີ່ຈະປົກປ້ອງພວກເຮົາ (ອຟຊ. 6:17) ແລະປ່ຽນແປງພວກເຮົາ (ຮຣ. 4:12). ພຣະເຢຊູຊົງໃຊ້ພຣະວັດຈະນະເພື່ອປົກປ້ອງພຣະອົງເອງຈາກການລໍ້ລວງ (ມທ. 4:4, 7, 10).



ຊາຕານຮູ້ວ່າມັນບໍ່ມີພະລັງທີ່ຈະຕໍ່ຕ້ານພຣະຄຳພີ. ເພາະສະນັ້ນມັນຈຶ່ງພະຍາຍາມທຳລາຍໂດຍທາງກາຍະພາບ (ທຳລາຍພຣະຄຳພີ). ມັນລົ້ມເຫລວ, ເພາະສະມາຄົມພຣະຄຳພີໄດ້ເລີ່ມແຈກຢາຍສຳເນົາພຣະຄຳພີເປັນຈຳນວນຫລາຍ. ຊາຕານຈຶ່ງພະຍາຍາມເຮັດໃຫ້ພຣະຄຳພີເສຍຊື່ສຽງໂດຍການວິພາກວິຈານຢ່າງຮຸນແຮງ. ແລະ ຕອນນີ້ມັນກໍ່ພະຍາຍາມຂັດຂວາງການອ່ານພຣະຄຳພີຂອງພວກເຮົາໂດຍໃຫ້ພວກເຮົາເສຍເວລາໄປກັບສິ່ງອື່ນໆ





ຂ້ອຍຈະປ່ອຍໃຫ້ມັນເຮັດແບບນີ້ໄດ້ບໍ? ຂ້ອຍຈະບໍ່ມີເວລາອ່ານພຣະຄຳພີບໍ? ການອ່ານພຣະຄຳພີຈະປ່ຽນແປງພວກເຮົາ ແລະ ເຮັດໃຫ້ພວກເຮົາເຂັ້ມແຂງຂຶ້ນເພື່ອຕໍ່ສູ້ກັບສັດຕູທີ່ຮ້າຍກາດ: ຊາຕານ.

# ວິທີທີ່ຖືກຕ້ອງ ແລະ ວິທີທີ່ບໍ່ຖືກຕ້ອງ ໃນການອ່ານພຣະຄຳພີ

“ຈົ່ງອົດສາພະຍາຍາມສະແດງຕົນ ເໝືອນເປັນຄົນທີ່ພິສູດແລ້ວຕໍ່ພຣະພັກພຣະເຈົ້າ ເປັນຄົນງານທີ່ບໍ່ຕ້ອງອາຍ ແລະ ໃຊ້ພຣະທຳແຫ່ງຄວາມຈິງຢ່າງຖືກຕ້ອງ (2 ຕມທ 2:15)



## ວິທີທີ່ບໍ່ຖືກຕ້ອງ

- ຄົ້ນຫາສິ່ງທີ່ສອດຄ້ອງກັບມຸມມອງຂອງພວກເຮົາ
- ເລືອກຂໍ້ພຣະຄຳພີແບບສຸ່ມ, ໂດຍບໍ່ມີຈຸດປະສົງ
- ເລືອກສ່ວນທີ່ພວກເຮົາມັກ, ແລະ ປະຕິເສດສ່ວນທີ່ບໍ່ມັກ

## ວິທີທີ່ຖືກຕ້ອງ

- ສະແຫວງຫາພຣະປະສົງຂອງພຣະອົງ
- ເຮັດການສຶກສາຢ່າງເປັນລະບົບ
- ຢ່າປະຕິເສດຂໍ້ພຣະຄຳພີໃດໆ ແຕ່ໃຫ້ວິເຄາະທຸກໆຂໍ້





ການສຶກສາພຣະຄຳພີຄວນເປັນໄປຢ່າງມີເຫດຜົນ, ແຕ່ເຫດຜົນຂອງພວກເຮົາຕ້ອງຍອມໃຫ້ພຣະວິນຍານບໍຣິສຸດຊົງນຳທາງ ເພື່ອທີ່ຈະໄດ້ເຂົ້າໃຈຈຸດສຳຄັນຂອງພຣະຄຳພີໄດ້ຢ່າງຖືກຕ້ອງ

ເປັນຫຍັງ? ເພາະເຫດຜົນຂອງພວກເຮົາມີຂໍ້ຈຳກັດ ແລະ ບໍ່ເປັນຕາເຊື່ອຖືສະເໝີໄປ. ນັ້ນເປັນເຫດຜົນວ່າ ເວລາທີ່ອ່ານພຣະຄຳພີ ເຮົາຈຶ່ງຕ້ອງສະແຫວງຫາສະຕິປັນຍາຈາກຜູ້ທີ່ຂຽນພຣະຄຳພີ



# ພຣະຄໍາພີແມ່ນຫຍັງ?



ໃນສັງຄົມຂອງພວກເຮົາ, ແລະ ແມ້ແຕ່ໃນສັງຄົມຄຣິດສຕຽນ, ກໍ່ມີຄວາມເຊື່ອວ່າຄວາມຈິງເປັນສິ່ງທີ່ບໍ່ຄົງທີ່, ແລະ ມັນສາມາດປັບປ່ຽນໄດ້ຕະຫລອດເວລາ

ຢ່າງໃດກໍ່ຕາມ ພຣະຄໍາພີ—ໃນຖານະພຣະວັດຈະນະຂອງພຣະເຈົ້າ—ກ່າວວ່າເປັນ ຄວາມຈິງທີ່ສົມບູນ (ພສສ 119:160; ຢຮ 17:17; ຢກບ 1:18). ແລະ ມີຄວາມ ບໍຣິສຸດ ແລະ ເປັນເກາະປ້ອງກັນ ຈາກເລ່ລ່ຽມຂອງສັດຕູ (ສພສ 30:5). ຖ້າວ່າພວກເຮົາເພີ່ມຄໍາຂອງພວກເຮົາເຂົ້າໄປ "ທີ່ຄິດວ່າເປັນຄວາມຈິງ" ພວກເຮົາກໍ່ຈະກາຍເປັນຄົນຂີ້ຕົວະຕໍ່ໜ້າພຣະພັກຂອງພຣະເຈົ້າ (ສພສ 30:6).

"ແກ່ນແທ້ຂອງກົດບັນຍັດ ລ້ວນແຕ່ເປັນຄວາມຈິງ, ການຕັດສິນອັນຍຸດຕິທໍາຂອງພຣະອົງກໍດໍາລົງຢູ່ສືບໄປເປັນນິດ
(ພສສ 119:160)



ຂໍ້ອ້າງໃດໆ, ຄວາມຈິງໃດໆ ຈະຕ້ອງໄດ້ຮັບການພິສູດຈາກພຣະຄໍາພີກ່ອນ. ເມື່ອມີຄວາມຂັດແຍ່ງລະຫວ່າງຄວາມຈິງໃນພຣະຄໍາພີ ແລະ ສິ່ງທີ່ເຮົາຄິດວ່າເປັນຄວາມຈິງ, ມີຄວາມເປັນໄປໄດ້ສອງປະການຄື: ພວກເຮົາເຂົ້າໃຈຜິດ ຫລືວ່າ ພວກເຮົາຕີຄວາມໝາຍຂອງພຣະຄໍາພີຜິດ. ເພາະພຣະຄໍາພີບໍ່ໄດ້ຜິດ

# ຜົນຕາມມາດ້ານດີ ໃນການອ່ານພຣະຄຳພີ



"ຂ້ານ້ອຍຖືຮັກສາຖ້ອຍຄຳຂອງພຣະອົງໄວ້ຢູ່ໃນຈິດໃຈ ເພື່ອວ່າຈະບໍ່ໄດ້ເຮັດບາບຕໍ່ສູ້ພຣະອົງ"
(ພສສ 119:11)



ແມ້ແຕ່ສັດຕູຂອງພຣະຄຳພີ ກໍ່ບໍ່ສາມາດປະຕິເສດໄດ້ວ່າ ພຣະຄຳພີນັ້ນປ່ຽນແປງຊີວິດຜູ້ຄົນໄດ້. ອຈ.ໂປໂລ ປຽບທຽບພຣະຄຳພີດັ່ງດາບທີ່ມີພະລັງມະຫາສານ

| | | | | |
|---|---|---|---|---|
| ເຮັດໃຫ້ພວກເຮົາ ເຫັນໂຕຕົນທີ່ແທ້ຈິງ ຂອງພວກເຮົາ (ຮຣ 4:12) | ຊ່ວຍຮັກສາພວກ ເຮົາຈາກການເຮັດ ຄວາມບາບ (ພສສ 119:11) | ເປັນອາຫານຝ່າຍ ຈິດວິນຍານ (ຢຣມຢ. 15:16) | ເຮັດໃຫ້ເຕີບໂຕທາງ ຈິດວິນຍານ(1 ປຕ 2:2) | ໃຫ້ຊີວິດແກ່ພວກ ເຮົາ (ຢຮ 6:63) |



ບໍ່ມີປື້ມຫົວໃດສົ່ງຜົນຕໍ່ຊີວິດຂອງພວກເຮົາຄືກັນກັບພຣະຄຳພີ. ເມື່ອພວກເຮົາເຕັມໃຈທີ່ຈະນຳຄຳສອນຂອງພຣະຄຳພີມາໃຊ້ໃນຊີວິດປະຈຳວັນ ພວກເຮົາກໍ່ຈະປ່ຽນແປງໄປໃນທາງທີ່ດີ

ເມື່ອພວກເຮົາອ່ານພຣະຄຳພີດ້ວຍໃຈທີ່ເປີດກວ້າງ ແລະ ຂໍໃຫ້ພຣະເຈົ້າຊົງປະທານການຊົງນຳຂອງພຣະວິນຍານບໍຣິສຸດ ຊີວິດຂອງພວກເຮົາກໍ່ຈະປ່ຽນແປງໄປ



“ດ້ວຍເຫດນີ້ ພວກເຮົາຈຶ່ງໂມທະນາຂອບພຣະຄຸນພຣະເຈົ້າໂດຍບໍ່ຢຸດຢັ້ງເພາະພວກເຈົ້າໄດ້ຮັບເອົາພຣະຄຳຂອງພຣະເຈົ້າ ທີ່ໄດ້ຍິນຈາກພວກເຮົານັ້ນ ບໍ່ເໝືອນເປັນຂໍ້ຄວາມຂອງມະນຸດ, ແຕ່ເປັນຈິງຄືເປັນພຣະຄຳຂອງພຣະເຈົ້າທີ່ດຳເນີນງານຢູ່ພາຍໃນເຈົ້າທັງຫລາຍທີ່ເຊື່ອ.” (1 ທສລນ 2:13)



ຜູ້ທີ່ຮັກພຣະຄຳພີ ຈະນັບຖືພຣະຄຳພີໃນຖານະເປັນພຣະວັດຈະນະຂອງພຣະເຈົ້າ (1 ທສລນ 2:13). ແລ້ວພວກເຮົາຈະເຊື່ອແບບນັ້ນໄດ້ແນວໃດ?

ອຈ ໂປໂລ ບອກພວກເຮົາວ່າ, ສຳລັບສິ່ງນີ້ ພວກເຮົາຈຳເປັນຕ້ອງມີວິຈາລະນາຍານຝ່າຍຈິດວິນຍານ ນັ້ນກໍ່ຄື ຄວາມສາມາດໃນການເຂົ້າໃຈສິ່ງທີ່ເປັນຝ່າຍວິນຍານ (1 ຄຣທ 2:14). ເພາະສະນັ້ນ ການໄຈ້ແຍກພຣະວັດຈະນະອັນສັກສິດກັບສິ່ງອື່ນ ຈຶ່ງເປັນວຽກງານຂອງພຣະວິນຍານບໍຣິສຸດທີ່ຢູ່ໃນໂຕຂອງພວກເຮົາ

# ມິດສະຫາຍຂອງພຣະຄຳພີ

**ເມື່ອພວກເຮົາຍອມຮັບເອົາພຣະຄຳພີໃນທາງເຫລົ່ານີ້...**

- ສະແດງໃຫ້ພວກເຮົາເຫັນສະຖານະຄວາມສຳພັນກັບພຣະເຈົ້າ
- ບອກພວກເຮົາເຖິງວິທີເສີມສ້າງຄວາມສຳພັນ
- ພວກເຮົາກຳລັງປະສົບກັບການປ່ຽນແປງເທື່ອລະໜ້ອຍ
- ພວກເຮົາກຳລັງເຂົ້າໃກ້ກັບພຣະເຢຊູ
- ເຮັດໃຫ້ພວກເຮົາສະຫລາດໃນເລື່ອງຄວາມລອດ
- ພວກເຮົາເຕີບໃຫຍ່ໃນຄວາມຮູ້ກ່ຽວກັບຄວາມຈິງ
- ຄວາມເຊື່ອຂອງພວກເຮົາເຕີບໂຕ ແລະ ເຂັ້ມແຂງ
- ພວກເຮົາມີຄວາມຫວັງ
- ພວກເຮົາຮູ້ວ່າ ຊີວິດທີ່ດີກວ່າ, ຊີວິດນິຣັນ ແລະ ຊີວິດທີ່ມະຫັດສະຈັນ ຖ້າພວກເຮົາຢູ່

“ພຣະຄຳພີເຜີຍຄວາມຈິງດ້ວຍຄວາມລຽບງ່າຍ ແລະ ການປັບໃຫ້ເຂົ້າກັບຄວາມຕ້ອງການ ແລະ ຄວາມປາຖະໜາຂອງຫົວໃຈມະນຸດຢ່າງສົມບູນແບບ, ເຊິ່ງເຮັດໃຫ້ຜູ້ທີ່ມີຄວາມຮູ້ສູງທີ່ສຸດປະຫລາດໃຈ ແລະ ຫລົງໄຫລ, ໃນຂະນະດຽວກັນກໍ່ຊ່ວຍໃຫ້ຜູ້ທີ່ຕໍ່າຕ້ອຍ ແລະ ຂາດການສຶກສາ ເຂົ້າໃຈຫົນທາງແຫ່ງຄວາມລອດ ແລະ ເມື່ອເຖິງເວລານັ້ນ ຄວາມຈິງທີ່ກ່າວໄວ້ຢ່າງລຽບງ່າຍເຫລົ່ານີ້ ກໍ່ຄອບຄຸມເຖິງເລື່ອງທີ່ສູງສົ່ງ, ກ້າວໄກ ແລະ ເກີນກວ່າທີ່ມະນຸດຈະເຂົ້າໃຈໄດ້.

ຍິ່ງພວກເຮົາຄົ້ນຄວ້າພຣະຄຳພີຫລາຍເທົ່າໃດ, ຄວາມເຊື່ອໝັ້ນຂອງພວກເຮົາກໍ່ຍິ່ງເລິກຊຶ້ງຫລາຍຂຶ້ນເທົ່ານັ້ນ ເພາະແມ່ນພຣະວັດຈະນະຂອງພຣະເຈົ້າຜູ້ຊົງພຣະຊົນຢູ່.”

EGW (Steps to Christ, p. 107)